| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດປະກອບກິດຈະການໂທລະຄົມມະນາຄົມ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPT-AOTO-5 | 09.11.2017 | ອົງການຄຸ້ມຄອງໂທລະຄົມມະນາຄົມ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບໃບອະນຸຍາດ | J - ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ກິດຈະການໂທລະຄົມມະນາຄົມ ແມ່ນເປັນການບໍລິການສາທາລະນະ ແລະ ໂຄງລ່າງພື້ນຖານ ທີ່ສໍາຄັນ ແລະ ຈໍາເປັນສໍາລັບປະເທດ ດັ່ງນັ້ນ ຈຶ່ງມີຄວາມຈໍາເປັນທີ່ຈະຕ້ອງມີການຮັບປະກັນວ່າ ການບໍລິການໂທລະຄົມມະນຄົມ ແມ່ນຈະໄດ້ຮັບການສະໜອງ ໂດຍສອດຄ່ອງກັບ ປະໂຫຍດສາທາລະນະຂອງປະເທດ ໃນພາບລວມ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນກິດຈະການໂທລະຄົມມະນາຄົມ ຊຶ່ງໝາຍເຖິງ ການຕິດຕໍ່ສື່ສານດ້ວຍການສົ່ງ ແລະ ການຮັບຂໍ້ມູນຂ່າວສານ, ສຽງ, ຮູບພາບ, ຕົວເລກ, ຕົວອັກສອນ, ເຄື່ອງໝາຍໃດໜຶ່ງ ດ້ວຍລະບົບສາຍ, ລະບົບແສງ, ລະບົບຄື້ນຄວາມຖີ່, ລະບົບແມ່ເຫລັກໄຟຟ້າ, ລະບົບອື່ນໃດໜຶ່ງ ຫລື ຫລາຍລະບົບລວມກັນ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.MPT.Gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | ອົງການຄຸ້ມຄອງ ໂທລະຄົມມະນາຄົມ ຮັບຜິດຊອບອອກໃບອະນຸຍາດດໍາເນີນທຸລະກິດ ມີຄືດັ່ງລຸ່ມນີ້: 1. ບໍລິການ ໂທລະຄົມມະນາຄົມ 2. ບໍລິການ ສື່ສານຜ່ານດາວທຽມ 3. ຕິດຕັ້ງ, ນໍາເຂົ້າ, ຈໍາໜ່າຍ, ຕິດຕັ້ງ ແລະ ສ້ອມແປງອຸປະກອນໂທລະຄົມມະນາຄົມ (ມາດຖານສູງ). |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ** | 10 | ຕ້ອງພິຈາລະນາຄໍາຮ້ອງຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ແຕ່ຫາກເຫັນວ່າ ເອກະສານບໍ່ຖືກຕ້ອງ ຫລື ບໍ່ມີເງື່ອນໄຂ ຫລື ບາງປະເພດບໍລິການມີຄວາມຈໍາເປັນຕ້ອງກວດສອບຜ່ານທາງດ້ານເຕັກນິກ ຫລື ວິຊາການທີ່ຕ້ອງໃຊ້ເວລາຍາວກວ່ານັ້ນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພາຍໃນກໍານົດເວລາ 5 ວັນລັດຖະການ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີຖານະທາງດ້ານການເງິນທີ່ໝັ້ນຄົງ; 2. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການພໍສົມຄວນທີ່ສົມຄູ່ກັບວຽກງານ; 3. ມີສໍານັກງານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານດ້ານຕ່າງໆ ຢ່າງພຽງພໍ ແລະ ເໝາະສົມກັບຂະໜາດກິດຈະການ; 4. ຊໍາລະຄ່າທໍານຽມ ແລະ ຄ່າບໍລິການຖືກຕ້ອງ ແລະ ຄົບຖ້ວນ; 5. ຕ້ອງປະກອບເອກະສານທີ່ກໍານົດໄວ້ໃຫ້ຄົບຖ້ວນ. | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ຖ້າຫາກຄໍາຮ້ອງ ແລະ ເອກະສານປະກອບ ບໍ່ຄົບຖ້ວນ ຫລື ຖືກຕ້ອງ ແລະ ຜູ້ຮ້ອງຂໍບໍ່ສາມາດ ປະຕິບັດຕາມເງື່ອນໄຂທີ່ລະບຸໄວ້. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 180 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | 1. ອາຍຸການຂອງແຕ່ລະປະເພດ ແມ່ນ: (i) 15 ປີ ສໍາລັບ ປະເພດ I; (ii) 10 ປີ ສໍາລັບ ປະເພດ II; (iii) 5 ປີ ສໍາລັບ ປະເພດ III; (iv) 3 ປີ ສໍາລັບ ປະເພດ IV 2. ຕ້ອງຕໍ່ອາຍຸກ່ອນໃບອະນຸຍາດໝົດກໍານົດ 30 ວັນລັດຖະການ, ຖ້າບໍ່ສາມາດສະເໜີຂໍຕໍ່ອາຍຸໃບອະນຸຍາດທັນກໍານົດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ກົມທີ່ເປັນຜູ້ອອກໃບອະນຸຍາດໃຫ້ ຖ້າບໍ່ແຈ້ງຖືວ່າ ມີຈຸດປະສົງທີ່ຈະຢຸດເຊົາດໍາເນີນກິດຈະການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ອອກອະນຸຍາດ ຈະດໍາເນີນການຍຸກເລີກອອກອະນຸຍາດ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທຳນຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 35000000.00 | 500000.00 | 0.00 | 35500000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ 003/ປປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 35000000.00 | 500000.00 | 0.00 | 35500000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ 003/ປປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) | 09/ສພຊ | 21.12.2011 | ມາດຕາ 22, 23, 24. |
| ຂໍ້ຕົກລົງ<br>ວ່າດ້ວຍການອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມ | 221/ປທສ | 02.02.2015 | ມາດຕາ 10, 11, 12, 13. |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ກຳມະວິທີການຜະລິດໂດຍຫຍໍ້ |
| ກົດລະບຽບການດຳເນີນງານພາຍໃນ |
| ບົດວິພາກເສດຖະກິດເຕັກນິກ |
| ສຳເນົາພາດສະປອດ / ໜັງສືຜ່ານແດນ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ຊີວະປະຫວັດຫຍໍ້ຂອງຜູ້ຂໍສ້າງຕັ້ງ |
| ສັນຍາຮ່ວມທຶນ, ສັນຍາສ້າງຕັ້ງ |

| ເອກະສານປະກອບ |
|---|
| ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 6 | 3 |
| 2016 | 0 | 6 |